# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 15 ມົກກະຣາ 2006 (1-15-2006)

---

## ເຣື່ອງຂອງຊີວິດ

**ຂໍ້ພຣະຄັມພີໃນບົດຮຽນ:** ມັດທາຍ 9:18-31, 36-38

**ພຣະຄັມພີແຫ່ງຄວາມຈິງ:** ການຕິດຕາມຕົວຢ່າງຂອງພຣະເຢຊູ, ພວກທີ່ເຊື່ອຕ້ອງມີສ່ວນໃນການສນັບສນູນສິດທິຊີວິດມະນຸດ, ສຸຂພາບ, ແລະຄວາມສົມບູນຂອງຊີວິດ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃຫ້ພັດທະນາທັດສະນະທີ່ຖືກຕ້ອງຕໍ່ເຣື່ອງນີ້ໂດຍ:

- ການເຊື່ອວ່າທຸກໆຄົນມີຄຸນຄ່າ; ແລະ
- ການຕັດສິນໃຈໃນທາງທີ່ທ່ານຈະມີສ່ວນໃນການສນັບສນູນສິດທິຊີວິດມະນຸດ, ສຸຂພາບ, ແລະຄວາມສົມບູນຂອງຊີວິດ.

## ຂ້າພະເຈົ້າສາມາດຮັບຮູ້ແລະໂຄຣົບຕໍ່ສິດທິຊີວິດມະນຸດໃນທາງໃດແດ່?

ໃນເດືອນມີນາ 2005 ຫລັງຈາກມີການຕໍ່ສູ້ຄະດີໃນສານເປັນເວລາຍຶດເຍື້ອຍາວນານ, ຜົວຂອງນາງແທຣີ ຊາຍໂວໄດ້ປະສົບຜົນສຳເຣັດໃນການຕໍ່ວ່າ ເຖິງເຣື່ອງການຖອດທໍ່ອາຫານອອກຈາກຫ່າງກາຍເມັຍຂອງຕົນ. ບໍ່ມີຄວາມຫຍຸ້ງຍາກອັນໃດຫລາຍເທົ່າກັບການທີ່ຄອບຄົວໄດ້ປະເຊີນຕໍ່ຄຳປະກາດວ່າ ຄົນນຶ່ງຂອງຄອບຄົວ "ສມອງຕາຍແລ້ວ," ແທຣີບໍ່ໄດ້ຕາຍຫລືກຳລັງຈະຕາຍຈົນກວ່າທາງສານໄດ້ອອກຄຳສັ່ງໃຫ້ຖອດທໍ່ນ້ຳ ແລະອາຫານຊຶ່ງເປັນແຫລ່ງດຽວເທົ່ານັ້ນໃນການຊຸບລ້ຽງຮ່າງກາຍ. ແທຣີຊາຍໂວໄດ້ຕາຍໃນວັນທີ່ 31, ເດືອນມີນາ 2005, ບໍ່ພຽງແຕ່ເປັນເພາະຮ່າງກາຍຂອງລາວຢຸດສະງັກບໍ່ທຳງານເທົ່ານັ້ນ, ແຕ່ວ່າຍັງລວມທັງການໄດ້ເອົາທຳນຽມທີ່ມີພື້ນຖານຂຶ້ນກັບຄຸນນະພາບຂອງຊີວິດມາແທນທີ່ທຳນຽມທີ່ມີພື້ນຖານໃນການໂຄຣົບສິດທິຊີວິດມະນຸດອີກດ້ວຍເພາະວ່າໄດ້ຊະນະໃນການໂຕ້ຖຽງນັ້ນ.

ທຸກໆມື້ພວກເຮົາໄດ້ປະເຊີນກັບຄວາມເປັນຈິງທີ່ຄົນອື່ນໆບໍ່ເຫັນຄຸນຄ່າຂອງຊີວິດມະນຸດ, ການແທ້ງລູກ, ການດັບຊີວິດທີ່ບໍ່ມີຄວາມເຈັບປວດໂດຍທ່ານໝໍໃນເຫດຜົນຂອງຄວາມເມດຕາ, ການທຳຮ້າຍທາງຮ່າງກາຍແລະທາງເພດ, ແລະຄະດີການປະຫັດປະຫານກັນທີ່ບາງຄົນໄດ້ເຮັດຢູ່ອັນເປັນຈຸດທີ່ລຸດຜ່ອນຄຸນຄ່າຂອງຊີວິດມະນຸດລົງໃນສັງຄົມສມັຍນີ້. ພຣະເຈົ້າໄດ້ຊົງສ້າງແລະໃຫ້ຄຸນຄ່າຊີວິດມະນຸດ. ພຣະອົງໄດ້ສົ່ງພຣະເຢຊູເພື່ອໄຖ່ພວກເຮົາແລະປະທານຊີວິດແກ່ພວກເຮົາເພື່ອເຮົາຈະໄດ້ຢ່າງຄົບບໍຣິບູນ. ພຣະເຢຊູໄດ້ຮັບຮູ້ຄຸນຄ່າຂອງຊີວິດມະນຸດຢູ່ສເມີ. ໃນການຕິດຕາມຕົວຢ່າງຂອງພຣະອົງ, ພວກທີ່ເຊື່ອຄວນມີສ່ວນໃນການສນັບສນູນສິດທິຊີວິດມະນຸດ, ສຸຂພາບ, ແລະຄວາມສົມບູນຂອງຊີວິດ.

## ສຶກສາພຣະຄັມພີ

**1. ຄວາມສຳຄັນຂອງຊີວິດ** (ມັດທາຍ 9:18-19, 23-26)

ມື້ນີ້ແມ່ນວັນອາທິດທີ່ຄຣິສຕະຈັກຫລາຍແຫ່ງທົ່ວອະເມຣິກາໃນເຄືອນິກາຍຊາວເທີນແບັບຕິສສເລີມສລອງວັນ

ແຫ່ງການໂຄຣົບສິດທິຊີວິດມະນຸດ. ດັ່ງທີ່ພວກເຮົາໄດ້ຮຽນຈາກພຣະທັມຕອນນີ້, ຄຸນຄ່າທີ່ພຣະເຢຊູໃຫ້ແກ່ຊີວິດມະນຸດກໍປາກົດຈະແຈ້ງ. ໃນການສຶກສານີ້ນີ້, ໝາຍສຳຄັນຂອງພຣະເຢຊູໄດ້ກະທຳແມ່ນກ່ຽວກັບຄວາມຕາຍ, ຄວາມເຈັບເປັນທີ່ຖືກແຍກອອກຈາກສັງຄົມເປັນເວລາຍາວນານ, ແລະຄວາມພິການຂອງຮ່າງກາຍ-ຕລອດທັງເຣື່ອງຕ່າງໆທີ່ເວົ້າເຖິງຄຸນຄ່າຂອງຊີວິດແລະຄວາມສຳຄັນຂອງຄວາມສົມບູນແລະສຸຂພາບ.

ພວກທີ່ເຊື່ອຄວນເຫັນພ້ອມໃນການໂຄຣົບສິດທິຊີວິດມະນຸດໃນທຸກໆດ້ານ. ເຖິງປານນັ້ນ, ການບັງຄັບໃຫ້ມີການແທ້ງລູກເປັນເຣື່ອງຈຳເປັນຮີບດ່ວນທີ່ກ່ຽວຂ້ອງກັບຄວາມໂຄຣົບສິດທິຊີວິດມະນຸດ. ວຽກງານຂອງກຸ່ມຮັກຊີວິດຈຶ່ງມີຄວາມສຳຄັນຫລາຍທີ່ສຸດ. ຄຣິສຕຽນຄວນອະທິຖານສແວງຫາຕຳແໜ່ງຂອງຕົນໃນການປົກປ້ອງຮັກສາຊີວິດ.

ໃນພຣະທັມຕອນນີ້, ພຣະເຢຊູປ່ຽນຈາກການຂັດຂວາງມາເປັນໂອກາດທີ່ຈະກະທຳໝາຍສຳຄັນທີ່ຊີ້ໃຫ້ເຫັນວ່າພຣະອົງໃຫ້ຄຸນຄ່າຊີວິດມະນຸດ, ສຸຂພາບ, ແລະຄວາມສົມບູນຂອງຊີວິດ. ພຣະເຢຊູກຳລັງ**ບອກ**ໃຫ້ພວກເຫລົ່າສາວົກຂອງພຣະອົງກ່ຽວກັບ**ເຣື່ອງເຫລົ່ານີ້**(ກ່ຽວກັບຄວາມຊົມຊື່ນຍິນດີຂນະທີ່ພຣະຄຣິດສະຖິດຢູ່ນຳ)ເມື່ອມີ**ຜູ້ນຶ່ງໃນຈຳນວນຜູ້ປົກຄອງ**ໄດ້ຕັດບົດພຣະອົງ. ຜູ້ຂຽນໜັງສືຂ່າວປະເສີດເຫລັ້ມອື່ນອີກ, ມາຣະໂກແລະລູກາ, ຊີ້ແຈງວ່າຜູ້ປົກຄອງຜູ້ນັ້ນແມ່ນຢາອີໂຣແລະລູກສາວຂອງລາວອາຍຸ 12 ປີ. ພຣະເຢຊູຕັ້ງໃຈຟັງທີ່ຊາຍຜູ້ນັ້ນ**ຄຸເຂົ່າຕໍ່ພຣະພັກພຣະອົງ**. ມັນແມ່ນການກະທຳທີ່ອອກມາຈາກຄວາມເຊື່ອແລະຄວາມຖ່ອມໃຈທີ່ຜູ້ປົກຄອງຈະຄຸເຂົ່າຂາບທູນຕໍ່ອາຈານຜູ້ທີ່ທ່ອງທ່ຽວພະເນຈອນໄປຕາມບ່ອນຕ່າງໆ.

ດ້ວຍນ້ຳສຽງທີ່ໜ້າສົງສານຂອງລາວ, ຢາອີໂຣທູນຕໍ່ພຣະເຢຊູໃຫ້**ມາ**ແລະແຕະຕ້ອງ**ລູກສາວ**ຂອງລາວຜູ້ທີ່**ໃກ້ຈະຕາຍແລ້ວ**. ຄຳກ່າວຂອງຢາອີໂຣໃນຄວາມເຊື່ອໂດຍເວົ້າວ່າໂດຍສິພຣະຫັດຂອງພຣະເຢຊູ,ລູກສາວຂອງລາວກໍຈະມີ**ຊີວິດຢູ່**.

**ພຣະເຢຊູແລະເຫລົ່າສາວົກຂອງພຣະອົງໄດ້ລຸກຂຶ້ນແລະຕິດຕາມໄປທີ່ເຮືອນ**ພໍ່ຂອງເດັກ. ລອງວາດພາບເບິ່ງຄວາມຊົມຊື່ນຍິນດີຂອງຢາອີໂຣ ໃນການກັບຄືນມາເຮືອນຂອງລາວຢ່າງຟ້າວຟັ່ງພ້ອມດ້ວຍພຣະເຢຊູ! ແຕ່ວ່າ, ຫົວໃຈຂອງລາວຄົງເກືອບຈະຢຸດເຕັ້ນເມື່ອລາວໄດ້ເຫັນ**ຝູງຊົນທີ່ຮ້ອງໄຫ້ຄ່ຳຄວນຢ່າງໂດ່ງດັງ**, ບົ່ງບອກວ່າລູກສາວໄດ້ຕາຍເສັຽແລ້ວ.

ພຣະເຢຊູໄດ້ອອກຄຳສັ່ງໃຫ້ພວກນັກຄ່ຳຄວນອາຊີບ, ເຊັ່ນ**ນັກເປົ່າຄຸ່ຍ**, ໃຫ້**ອອກຈາກ**ທີ່ນັ້ນ. ພຣະອົງໄດ້ປະກາດວ່າເດັກນ້ອຍນັ້ນບໍ່ໄດ້**ຕາຍ**ດອກພຽງແຕ່**ນອນຫລັບ**ເທົ່ານັ້ນ, ຄຳບັນລະຍາຍແບບດຽວກັນກັບການຕາຍຂອງລາຊະໂຣ. ການກະທຳຂອງພຣະເຢຊູໄດ້ສະແດງໃຫ້ເຫັນວ່າພຣະອົງເປັນເຈົ້ານາຍເໜືອຊີວິດແລະຄວາມຕາຍ.

**ຝູງຊົນ...ໄດ້ເລີ້ມຫົວຂວັນ**ພຣະເຢຊູ. ໂດຍບໍ່ໄດ້ປ່ອຍໃຫ້ການບໍ່ເຊື່ອຂອງພວກເຂົາຢັບຢັ້ງພຣະອົງ, ພຣະເຢຊູໄດ້ບອກພວກເຂົາ**ອອກໄປນອກ**ເຮືອນ. ພຣະເຢຊູສະເດັດຕົງໄປທີ່ເດັກຍິງນັ້ນ, **ຊົງຈັບມື**ເດັກນ້ອຍນັ້ນແລະເຮັດໃຫ້ລາວຄືນຂຶ້ນມາອີກ.

ການຕໍ່ຊີວິດໜຸ່ມນ້ອຍຄົນນີ້ໄດ້ຊີ້ໃຫ້ພວກເຮົາເຫັນວ່າການຮັກສາແລະການປົກປ້ອງຊີວິດຂອງພວກເດັກນ້ອຍ, ທັງພວກທີ່ເກີດແລ້ວແລະຍັງບໍ່ທັນໄດ້ເກີດເທື່ອ. ພວກເຮົາບໍ່ສາມາດທີ່ຈະອະນຸຍາດໃຫ້ຝ່າຍກົງກັນຂ້າມ, ເວົ້າເຍາະເຍີ້ຍ, ຫລືຂາດຄວາມເຊື່ອເຮັດໃຫ້ເຮົາອອກຈາກການປົກປ້ອງຊີວິດທີ່ໄຮ້ດຽງສາເຫລົ່ານີ້. ໃຫ້ຄວາມກະຣຸນາແລະຄວາມຮັກຂອງພຣະຜູ້ຊ່ວຍໃຫ້ພົ້ນຊູກຳລັງໃຈ; ພວກເຮົາຕ້ອງເຮັດຕາມທີ່ເຮົາເຮັດໄດ້ໃນການສງວນຊີວິດ.(ຄຳແນະນຳບາງຢ່າງສຳລັບການສງວນຊີວິດທີ່ທ່ານສາມາດເຮັດໄດ້ຄືເຂົ້າອິນເທີແນັດ

www.forfaithandfamily.com and click "Issues" and "Sanctity of human life" or call 1-800-475-9127.)

## ໒. <u>ຄວາມສຳຄັນຂອງສຸຂພາບ</u> (ມັດທາຍ 9:20-22)

ເທິງເສັ້ນທາງໄປເຮືອນຂອງຢາອີໂຣ, ພຣະເຢຊູໄດ້ຖືກຕັດບົດເປັນເທື່ອທີສອງ. ມີຍິງຜູ້ທີ່**ມີພະຍາດເລືອດຕົກເປັນເວລາ 12 ປີ**ໄດ້ມາຫາພຣະອົງ. ພະຍາດເລືອດຕົກຂອງລາວໄດ້ເຮັດໃຫ້ລາວຕົກຢູ່ໃນກຸ່ມຄົນມີມົນທິນໃນສັງຄົມຂອງຊາວຢິວແລະເປັນເຫດໃຫ້ລາວຕ້ອງຖືກປະປ່ອຍໃຫ້ຢູ່ນອກເມືອງ. ເພື່ອບໍ່ໃຫ້ຜິດຕໍ່ກົດຣະບຽບ, ຜູ້ຍິງຄົນນີ້ຈຶ່ງ**ລອບມາທາງຫລັງ**ພຣະເຢຊູ. ຢ່າງບໍ່ຕ້ອງສົງສັຍເລີຍ, ລາວຄົງຈະທໍ້ແທ້ຕໍ່ພວກຄົນທີ່ຕິດຕາມພຣະເຢຊູ.

ລາວໄດ້ບາຍ**ເຄື່ອງທົງຂອງພຣະອົງ**, ໂດຍເຊື່ອວ່າການຈັບ**ເຄື່ອງທົງ**ຂອງພຣະອົງຈະຊ່ວຍໃຫ້ຕົນດີຈາກພະຍາດ. ພຣະເຢຊູບໍ່ໄດ້ຕິຕຽນຜູ້ທີ່ມາຕັດບົດຣາຊກິດອັນຮີບດ່ວນຂອງພຣະອົງໃນການສະແດງຄວາມເມດຕາ. ແທນທີ່ຈະເປັນຢ່າງນັ້ນ, ພຣະອົງໂຕ້ຕອບຍິງຄົນນັ້ນວ່າຄວາມເຊື່ອກັບການໃຫ້ຫາຍດີ.

ເມື່ອພຣະເຢຊູ**ຫັນມາແລະເຫັນລາວ**, ບາງທີພຣະອົງມີຮອຍຍິ້ມເບົາໆຂນະທີ່ພຣະອົງກ່າວກັບນາງວ່າ "**ຈົ່ງມີຄວາມກ້າຫານ**." ບໍ່ມີໃຜທີ່ຈະຕ້ອງຢ້ານໃນການເຂົ້າມາຫາເຈົ້ານາຍທີ່ເຕັມໄປດ້ວຍຄວາມເມດຕາ. ພຣະເຢຊູບໍ່ພຽງແຕ່ປິ່ນປົວຍິງຄົນນັ້ນ,ຄືຜູ້**ທີ່ຫາຍດີພະຍາດເມື່ອກີ້ນີ້**, ພຣະອົງໄດ້ກະທຳໃຫ້ຖືກຕ້ອງຕາມແບບແຜນທີ່ນາງມີນັ້ນອີກດ້ວຍ. ພຣະເຢຊູໄດ້ປິ່ນປົວໃຫ້ຫາຍດີຈາກພະຍາດໃນການຕອບສນອງຕໍ່**ຄວາມເຊື່ອ**ຂອງລາວ.

ການກະທຳຂອງນາຍແພດຜູ້ປະເສີດໃນການປົວແປງຍິງຄົນນີ້ໃຫ້ມີສຸຂພາບດີ ກໍຫມາຍເຖິງພຣະເຢຊູໄດ້ວາງຄຸນຄ່າສູງຕໍ່ສຸຂພາບມະນຸດແລະການຢູ່ດີມີແຮງ. ພວກທີ່ເຊື່ອຄວນຕິດຕາມຕົວຢ່າງຂອງພຣະອົງໃນການດຳຣົງຊີວິດຢ່າງມີສຸຂພາບທີ່ດີແລະການຊ່ວຍເຫລືອຄົນອື່ນໃຫ້ເຮັດເຊັ່ນດຽວກັນ. ການສນັບສນູນສຸຂພາບມະນຸດແມ່ນລວມທັງການກິນອາຫານທີ່ເຫມາະສົມ, ຫັດກາຍ, ກວດສຸຂພາບສມ່ຳສເມີ, ແລະການຝຶກແອບອື່ນອີກທີ່ເປັນປໂຍດຕໍ່ສຸຂພາບ. ຄຸນນະພາບຂອງຊີວິດຕລອດທັງຄວາມບໍຣິສຸດຂອງຊີວິດຄວນຈະເປັນສິ່ງທີ່ສຳຄັນ. ສລູບລວມແລ້ວ, ພຣະເຢຊູໄດ້ມາເພື່ອພວກເຮົາຈະໄດ້ທັງສອງຢ່າງຄືຊີວິດອັນຕລອດໄປເປັນນິດແລະຊີວິດທີ່ຄົບບໍຣິບູນ.

## 3. <u>ຄວາມສຳຄັນໃນຄວາມສົມບູນຂອງຊີວິດ</u> (ມັດທາຍ 9:27-31)

ພຣະເຢຊູໄດ້ປະເຊີນກັບຊາຍ**ຕາບອດສອງຄົນ**ຫລັງຈາກທີ່ໄດ້ອອກມາຈາກເຮືອນຂອງຜູ້ປົກຄອງ. ບາງທີພວກເຂົາຄົງໄດ້ຍິນສຽງຕື່ນຕົກໃຈຈາກຝູງຊົນທີ່ກຳລັງເວົ້າກັນຢ່າງຕື່ນເຕັ້ນເຖິງເຣື່ອງຫມາຍສຳຄັນທີ່ເຮືອນຂອງຢາອີໂຣ. ໂດຍການຮູ້ວ່າພຣະເຢຊູສະເດັດມາໃກ້ແລ້ວ, ພວກເຂົາຮ້ອງຂໍຄວາມເມດຕາຈາກພຣະອົງ, ໂດຍຮ້ອງວ່າ "**ບຸດດາວິດເອີຍ**."

ຄວາມຫມາຍຂອງຄຳວ່າ*ບຸດດາວິດ* ແມ່ນເລັງເຖິງພຣະເມຊີອາ. ພວກເຂົາບໍ່ໄດ້ຮ້ອງຂໍຄວາມຊ່ວຍເຫລືອຈາກນາຍຄຣູທຳມະດາສາມັນ. ພວກເຂົາໄດ້ສະແດງຄວາມເຊື່ອຂອງພວກເຂົາຢ່າງເປີດເຜີຍວ່າພຣະເຢຊູເປັນຜູ້ຖືກເຈີມຈາກພຣະເຈົ້າເພື່ອອິສຣາເອັນ. ເທິງພື້ນຖານໃນການເປັນພຣະບຸດຂອງພຣະອົງ, ພວກເຂົາໄດ້ຂໍຮ້ອງເອົາຄວາມເມດຕາປານີ. ການແຈ້ງຝ່າຍຈິດວິນຍານຂອງພວກເຂົາໄດ້ຖືກຍົກລະດັບໃຫ້ສູງຂຶ້ນແທນທີ່ຈະເສື່ອມໂຊມລົງໂດຍຄວາມບອດຝ່າຍຮ່າງກາຍຂອງພວກເຂົານັ້ນ.

ພວກເຂົາໄດ້ສືບຕໍ່ອົດທົນຕໍ່ຄຳຂໍຮ້ອງຂອງພວກເຂົາ, ແມ້ກະທັ້ງຕ້ອງໄດ້ເດີນຕິດຕາມພຣະເຢຊູຈົນພຣະອົງ**ໄດ້ເຂົ້າໄປໃນເຮືອນ**. ມັນຄ້າຍກັບເຣື່ອງຂອງຢາອີໂຣ, ເມື່ອຄວາມເຊື່ອສົມກັບຄວາມຢາກໄດ້ອັນແຮງກ້າກໍເຮັດໃຫ້ເກີດຄວາມກ້າຫານຂຶ້ນ. ພຣະເຢຊູໄດ້ເນັ້ນໃສ່ແຕ່ເຣື່ອງຄວາມເຊື່ອຂອງພວກເຂົາເມື່ອພຣະອົງຖາມວ່າ ພວກເຈົ້າເຊື່ອວ່າເຮົາອາດຈະ**ເຮັດການນີ້ໄດ້ຫລື**-ໂດຍການຮູ້ແລ້ວວ່າພວກເຂົາຕ້ອງການຢາກຫາຍດີເປັນປົກກະຕິ.

ຈາກຄຳຕອບຂອງພວກເຂົາບໍ່ພຽງແຕ່ມີຄຳຢັ້ງຢືນເທົ່ານັ້ນ, ແຕ່ລວມທັງຄຳຊາບຊຶ້ງທີ່ເຂົາຮ້ອງພຣະອົງວ່າ "**ພຣະຜູ້ເປັນເຈົ້າ**." ນາມຍົດນີ້ເປັນພິເສດເມື່ອໃຊ້ຄູ່ກັບຄຳວ່າ "ບຸດດາວິດ" ບໍ່ພຽງແຕ່ສະແດງຄວາມນັບຖືຕໍ່ຜູ້ສອນທີ່ສລາດແບບທຳມະດາຊື່ໆ, ແຕ່ຍັງຫມາຍເຖິງການຍອມຮັບຮູ້ວ່າພຣະເຢຊູເປັນເຈົ້ານາຍເຫນືອພວກເຂົາ.

ພຣະເຢຊູໄດ້ຕອບສນອງຕໍ່**ຄວາມເຊື່ອ**ຂອງພວກເຂົາ ໂດຍຊົງປົວເຂົາໃຫ້ຫາຍດີຈາກການບອດນັ້ນ, ເຮັດໃຫ້ພວກເຂົາສົມບູນດີ. ຕໍ່ຈາກນັ້ນມາຫນ້ອຍນຶ່ງ, **ພຣະອົງໄດ້ຊົງບາຍຕາແລະຕາຂອງພວກເຂົາກໍຖືກເປີດອອກ**. ພຣະເຢຊູໄດ້ບອກພວກເຂົາວ່າການປົວໃຫ້ຫາຍນີ້**ແມ່ນອີງຕາມຄວາມເຊື່ອ**. ຄວາມເຊື່ອບໍ່ໄດ້ປົວພວກເຂົາ. ພຣະເຢຊູໄດ້ປົວເຂົາໃຫ້ຫາຍດີ. ແຕ່ວ່າ, ພຣະອົງໄດ້ປົວເຂົາໃນການຕອບສນອງຕໍ່ຄວາມເຊື່ອຂອງພວກເຂົາທີ່ວາງໃຈໃນພຣະອົງ-ບໍ່ພຽງແຕ່ມີຄວາມເຊື່ອໃນຄວາມສາມາດປົວໃຫ້ດີຂອງພຣະອົງ, ແຕ່ລວມທັງເຊື່ອວ່າພຣະອົງເປັນພຣະເມຊີອານຳດ້ວຍ. ເຖິງວ່າ, ພຣະເຢຊູ**ໄດ້ເຕືອນ**ເຂົາບໍ່ໃຫ້ບອກຜູ້ໃດກ່ຽວກັບຫມາຍສຳຄັນນັ້ນ, ພວກເຂົາກັບ**ເຜີຍແຜ່ເຣື່ອງພຣະອົງ**ໃນທົ່ວຂົງເຂດໃກ້ຄຽງນັ້ນດ້ວຍ.

ມີຫລາຍຄົນທີ່ມີຂອບເຂດຈຳກັດໃນຄວາມສາມາດຂອງພວກເຂົາໃນການປະກອບສ່ວນໃນສັງຄົມ. ພວກທີ່ຕິດຕາມພຣະເຢຊູໄດ້ສນັບສນູນຕໍ່ຄວາມສົມບູນຂອງຊີວິດມະນຸດ ແລະເຮັດທຸກຢ່າງເພື່ອຊ່ວຍຄົນທັງຫລາຍໃຫ້ມີປະສົບການເພີ້ມຫລາຍຂຶ້ນໃນຄວາມພໍໃຈຕໍ່ຊີວິດ.

## 4. <u>ຄວາມສຳຄັນຂອງການປະກອບສ່ວນ</u> (ມັດທາຍ 9:36-38)

ຫນ້າທີ່ສ່ວນນຶ່ງຂອງຄຣິສຕະຈັກກ່ຽວເຣື່ອງສິດທິຊີວິດມະນຸດແມ່ນການໃຫ້ຄຳແນະນຳຕໍ່ຜູ້ທີ່ຖືກປະຈານຂາຍຫນ້າ, ຜູ້ທີ່ຂາດຄວາມຊ່ວຍເຫລືອ, ແລະຜູ້ທີ່ຂາດຜູ້ນຳພາແລະແນະນຳ. ພຣະເຢຊູ**ໄດ້ມີຄວາມສົງສານ**ຕໍ່ຝູງຊົນທີ່ມາຫຸ້ມອ້ອມພຣະອົງຂນະທີ່ພຣະອົງສືບຕໍ່ທ່ອງທ່ຽວໄປມາຕາມເມືອງຕ່າງໆ, ເທສນາສັ່ງສອນແລະປິ່ນປົວຄົນໃຫ້ຫາຍດີ. ພວກເຂົາ**ອິດອ່ອນໂຮຍແຮງໄປ**. ພຣະອົງໄດ້ເຫັນເຂົາ**ເຫມືອນຝູງແກະທີ່ບໍ່ມີຜູ້ລ້ຽງ**. ໃນຖານະທີ່ເປັນຜູ້ລ້ຽງແກະທີ່ດີນັ້ນ, ພຣະເຢຊູໄດ້ເປັນຕົວຢ່າງໃນການສະແດງຄວາມສົງສານແລະຄວາມເປັນຫ່ວງໃຍຢ່າງແທ້ຈິງ.

ພຣະເຢຊູໄດ້ເຫັນຄວາມຕ້ອງການຂອງປະຊາຊົນແລະໄດ້ສັງເກດເຫັນວ່າ**ເຂົ້າທີ່ຈະກ່ຽວນັ້ນກໍຫລາຍແທ້**ແຕ່ວ່າຍັງຕ້ອງການຜູ້ທີ່ຕິດຕາມຕົວຢ່າງຂອງພຣະອົງໃຫ້ເພີ້ມຫລາຍຂຶ້ນ. ພຣະອົງໄດ້ຊັກຊວນ**ພວກສາວົກຂອງພຣະອົງ**ໃຫ້**ອ້ອນວອນ**ຜູ້ເປັນ**ເຈົ້າຂອງນາ**ໃຫ້ຈຳ**ຄົນງານ**ໃຫ້ຫລາຍຂຶ້ນ. ພຣະຣາຊກິດຂອງພຣະເຢຊູຊຶ່ງລວມທັງການສິດສອນ, ການເທສນາ, ແລະການປິ່ນປົວໃຫ້ຫາຍດີ. ພຣະອົງຄາດຫວັງຈາກພວກທີ່ຕິດຕາມພຣະອົງໃຫ້ພວກເຂົາເອງປະກອບສ່ວນໃນພາຣະກິດການຮັບຮູ້ຊີວິດ.

ພຣະເຢຊູບໍ່ພຽງແຕ່ໄດ້ສອນເຣື່ອງຄວາມສົງສານ, ກິຈການປະຈຳວັນຂອງພຣະອົງກໍເຕັມໄປດ້ວຍການເປັນຫ່ວງເປັນໃຍ, ເປັນເຄື່ອງບູຊາຖວາຍຮັບໃຊ້. ພຣະອົງບໍ່ພຽງແຕ່ໄດ້ສະແດງອອກເຖິງຄວາມເປັນຫ່ວງສຳລັບຝ່າຍຈິດຂອງປະຊາຊົນເທົ່ານັ້ນ. ພຣະອົງຍັງໄດ້ພິສູດໃຫ້ເຫັນການເຕັມໄປດ້ວຍຄວາມຮູ້ສຶກຢ່າງ

ດູດດື່ມຕໍ່ຄວາມຢູ່ດີມີແຮງທາງຮ່າງກາຍຂອງພວກເຂົາ. ທ່ານໄດ້ແບ່ງປັນຄວາມຫ່ວງໃຍຂອງພຣະເຢຊູແລະການຜູກມັດຕໍ່ຊີວິດ-ທັງຊີວິດອັນຕລອດໄປເປັນນິດເທິງພື້ນຖານວ່າພຣະອົງເປັນພຣະຜູ້ຊ່ວຍໃຫ້ພົ້ນບາບ,ແລະສິດທິຊີວິດມະນຸດເທິງພື້ນຖານວ່າພຣະອົງເປັນຜູ້ລ້ຽງແກະ?

ຄວາມຈິງທີ່ໄດ້ສອນໃນບົດຮຽນນີ້ນີ້ມີດັ່ງຕໍ່ໄປນີ້:

- ຊີວິດມະນຸດທັງຫມົດມີຄວາມສຳຄັນຕໍ່ຜູ້ທີ່ໃຫ້ຊີວິດນັ້ນ, ແລະຄວນຈະເປັນສິ່ງສຳຄັນຂອງພວກທີ່ຕິດຕາມພຣະອົງເຫມືອນກັນ.
- ຊີວິດທີ່ສົມບູນດີມີຄວາມສຳຄັນຕໍ່ແພດຜູ້ປະເສີດ, ແລະຄວນຈະເປັນສິ່ງສຳຄັນຂອງພວກທີ່ຕິດຕາມພຣະອົງເຫມືອນກັນ.
- ຄວາມສົມບູນຂອງຮ່າງກາຍແລະວິນຍານສຳຄັນຕໍ່ພຣະເມຊີອາ,ແລະຄວນຈະເປັນສິ່ງສຳຄັນຂອງພວກທີ່ຕິດຕາມພຣະອົງເຫມືອນກັນ.
- ຄວາມກະຣຸນາປານີເປັນນິສັຍຂອງຜູ້ລ້ຽງແກະທີ່ດີ, ແລະຄວນຈະເປັນຂອງພວກທີ່ຕິດຕາມພຣະອົງເຫມືອນກັນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org   by PA.